# ສູດແຫ່ງຄວາມ
# ສຳເລັດ



Lesson 1 for October 4, 2025



“ຈົ່ງມີໃຈເດັດດ່ຽວແລະ
ກ້າຫານ ແລະ ໃຫ້ແນ່ໃຈວ່າ
ເຈົ້າເຊື່ອຟັງກົດບັນຍັດທຸກຂໍ້
ຂອງເຮົາ ທີ່ໂມເຊຜູ້ຮັບໃຊ້
ຂອງເຮົາໄດ້ມອບໃຫ້ແກ່ເຈົ້າ.
ຢ່າປະຖິ້ມຂໍ້ໃດຂໍ້ໜຶ່ງ ແລະ
ເຈົ້າຈະໄດ້ປະສົບຄວາມສຳ
ເລັດໃນທຸກບ່ອນທີ່ເຈົ້າໄປ”

ໂຢຊວຍ 1:7



ຫລັງຈາກ 40 ປີແຫ່ງການເດີນທາງ, ຄົນລຸ້ນໃໝ່ກໍ່ໄດ້ກຳເນີດຂຶ້ນ, ແລະ ກໍ່ເຖິງເວລາແລ້ວທີ່ຈະພິຊິດດິນແດນແຫ່ງພັນທະສັນຍາ. ໂມເຊໄດ້ເສຍຊີວິດລົງກ່ອນໄປເຖິງທີ່ນັ້ນ, ແລະ ຜູ້ນຳຄົນໃໝ່ໄດ້ຖືກເລືອກໂດຍພຣະເຈົ້າເພື່ອພາລະກິດນີ້ ຜູ້ນັ້ນກໍ່ຄື: ໂຢຊວຍ

ກ່ອນທີ່ຈະເລີ່ມຕົ້ນການພິຊິດນີ້, ທັງຜູ້ນຳ ແລະ ທັງຄົນລຸ້ນໃໝ່ໄດ້ຮັບການຊົງຮຽກເອີ້ນໃຫ້ວາງໃຈໃນພຣະເຈົ້າຢ່າງເຕັມທີ່.

ໃນຂະນະທີ່ຄົນລຸ້ນປະຈຸບັນ (ພວກເຮົາ) ໄດ້ຢືນຢູ່ເທິງເຂດແດນຂອງແຜ່ນດິນຄານາອານແຫ່ງສະຫວັນ, ສຽງຮ້ອງຂອງພຣະເຈົ້າຍັງຄົງດັງກ້ອງຢ່າງຊົງພະລັງວ່າ: "ຈົ່ງມີໃຈເດັດດ່ຽວແລະກ້າຫານ" (ໂຢຊວຍ. 1:7).

ບົດນຳ (ໂຢຊວຍ 1:1-3):

- ໂມເຊ ແລະ ໂຢຊວຍ
- ໂຄງສ້າງຂອງພຣະທຳໂຢຊວຍ

ພັນທະກິດຂອງໂຢຊວຍ (ຢຊ 1:4-9):

- ການສືບທອດພັນທະສັນຍາ
- ຄວາມເຂັ້ມແຂງແລະຄວາມກ້າຫານ
- ຄວາມສຳເລັດຂອງພັນທະກິດ





# ບົດນຳ
# (ໂຢຊວຍ 1:1-3)

# ໂມເຊ ແລະ ໂຢຊວຍ

"ຫລັງຈາກໂມເຊຜູ້ຮັບໃຊ້ຂອງພຣະເຈົ້າຢາເວໄດ້ຕາຍໄປແລ້ວ ພຣະເຈົ້າຢາເວໄດ້ສັ່ງໂຢຊວຍ ລູກຊາຍຂອງນູນ ຜູ້ຊ່ວຍວ່າການຂອງໂມເຊວ່າ:" (ຢຊ 1:1)

ໃນບົດທຳອິດຂອງພຣະທຳໂຢຊວຍ, ໂມເຊໄດ້ຖືກກ່າວເຖິງ ເຖິງ11ຄັ້ງ, ແລະ ຊື່ຂອງລາວກໍ່ໄດ້ປາກົດໃນຫລາຍໆຄັ້ງຕະຫລອດທັງເຫລັ້ມ.

ຜູ້ນຳທັງສອງຄົນ ມີຄວາມຄ້າຍຄືກັນຢູ່ຫລາຍບ່ອນ:





ເຖິງວ່າບົດທຳອິດຂອງໂຢຊວຍຈະຖືກບັນທຶກເຖິງການປ່ຽນລະຫວ່າງຜູ້ນຳທີ່ຍິ່ງໃຫຍ່ເຖິງສອງຄົນກໍ່ຕາມ. ແຕ່ພວກເຂົາທັງສອງກໍ່ບໍ່ໄດ້ມີບົດບາດຄວາມສຳຄັນຫລາຍກວ່າພຣະເຈົ້າ. ແລະ ເປັນຜູ້ນຳຊົນຊາດອິດສະຣາເອນ. ແລະ ບໍ່ຕ້ອງສົງໄສເລີຍວ່າ ຜູ້ນຳທີ່ແທ້ຈິງແມ່ນໃຜ?



ພຣະເຈົ້າຊົງປາກົດຕໍ່ພວກເຂົາ
(ອພຍ. 3:2-4; ຢຊ. 5:13-14)





ພວກເຂົາຖືກຂໍໃຫ້ປົດເກີບ
(ອພຍ. 3:5 ; ຢຊ. 5:15)





ພຣະເຈົ້າຊົງສັນຍາວ່າຈະຢູ່ກັບພວກເຂົາ
(ອພຍ. 3:12; ຢຊ. 1:5)





ພວກເຂົາສະເຫລີມສະຫລອງເທດສະການປັດສະຄາ
(ອພຍ. 12:21-23; ຢຊ. 5:10)





ພວກເຂົາລຸຍຜ່ານນ້ຳໄປເທິງດິນແຫ້ງ
(Ex. 14:21-22; Josh. 3:14-17)





ເບິ່ງແຍງດ້ວຍມານາ, ແລະ ມານາກໍ່ເຊົາຕົກລົງມາ
(ອພຍ . 16:4-5, 31; ຢຊ. 5:11-12)





ພວກເຂົາສົ່ງນັກສືບອອກໄປສອດແນມ
(ຈຊບຊ. 13:1-3; ຢຊ. 2:1)



“ໂຢຊວຍໄດ້ຮັບການຍອມຮັບຈາກຊາວອິດສະຣາເອນ. ເປັນທີ່ຮູ້ຈັກໃນຖານະນັກຮົບ, ທັງພອນສະຫວັນ ແລະ ຄຸນນະທຳຂອງລາວມີຄຸນຄ່າທີ່ຍິ່ງໃຫຍ່ໃນປະຫວັດສາດ. ຄວາມກ້າຫານ, ຄວາມມຸ່ງໝັ້ນ ຄວາມອົດທົນ, ຄວາມເດັດດ່ຽວ, ຄວາມບໍ່ເຊື່ອມຊາມ, ຄວາມບໍ່ເຫັນແກ່ໂຕ, ບໍ່ສົນໃຈໃນຜົນປະໂຫຍດສ່ວນໂຕ ແຕ່ສົນໃຈໃນຜົນປະໂຫຍດສ່ວນລວມ. ແລະ ເໜືອກວ່າສິ່ງໃດ ແມ່ນແຮງບັນດານໃຈຈາກຄວາມເຊື່ອໝັ້ນຄົງໃນພຣະເຈົ້າ. ນີ້ແມ່ນລັກສະນະນິໄສຂອງຊາຍຜູ້ໜຶ່ງທີ່ພຣະເຈົ້າຊົງຄັດສັນໃນນຳທັບອິດສະຣາເອນ ເມື່ອບຸກເຂົ້າໂຈມຕີສູ່ດິນແດນແຫ່ງພັນທະສັນຍາ. ໃນຊ່ວງຢູ່ໃນຖິ່ນແຫ້ງແລ້ງກັນດານ ລາວໄດ້ເຮັດໜ້າທີ່ເປັນຜູ້ຊ່ວຍເຫລືອຂອງໂມເຊ ແລະ ດ້ວຍຄວາມຊື່ສັດ, ຄວາມງຽບຂຶມ ແລະ ບໍ່ເສແສ້ງ, ຄວາມແນ່ວແນ່ ທີ່ຈະຮັກສາໄວ້ແບບບໍ່ຫວັນໄຫວ ທ່າມກາງອັນຕະລາຍ. ລາວໄດ້ສະແດງໃຫ້ເຫັນເຖິງຄວາມເໝາະສົມທີ່ຈະສືບທອດຕຳແໜ່ງຕໍ່ຈາກໂມເຊ ກ່ອນທີ່ພຣະເຈົ້າຈະຊົງຮຽກເອີ້ນລາວໃຫ້ຮັບພັນທະກິດນີ້.

EGW (Patriarchs and Prophets, p. 481)

# ໂຄງສ້າງຂອງພຣະທຳໂຢຊວຍ

"ໂມເຊຜູ້ຮັບໃຊ້ຂອງເຮົາກໍ່ຕາຍໄປແລ້ວ ບັດນີ້ເຈົ້າກັບປະຊາຊົນອິດສະຣາເອນທຸກຄົນ ຈົ່ງຕຽມຕົວໃຫ້ພ້ອມ ແລະ ຂ້າມແມ່ນ້ຳຈໍແດນ ເຂົ້າໄປໃນດິນແດນທີ່ເຮົາກຳລັງໃຫ້ພວກເຈົ້າ" (ຢຊ 1:2)

ພຣະທຳໂຢຊວຍ ໄດ້ນຳສະເໜີໃຫ້ເຫັນເຖິງຄວາມສຳເລັດຂອງພຣະສັນຍາທີ່ພຣະເຈົ້າຊົງປະທານແກ່ຊົນຊາດອິດສະຣາເອນ ຕອນທີ່ພຣະອົງຊົງນຳພວກເຂົາອອກມາຈາກປະເທດເອຢິບ, ນັ້ນກໍ່ຄືການປະທານແຜ່ນດິນຄານາອານໃຫ້ແກ່ພວກເຂົາ, ໃນພຣະທຳໂຢຊວຍໄດ້ແບ່ງເປັນ 4 ສ່ວນດັ່ງນີ້:

| | |
|---|---|
| **ການຂ້າມເຂົ້າສູ່ຄານາອານ** | |
| ຢຊ 1:1-9 | ຢຊ 1:1-5:12 |
| **ເຂົ້າຍຶດເອົາດິນແດນຄານາອານ** | |
| ຢຊ 1:10-11 | ຢຊ 5:13-12:24 |
| **ແບ່ງແຍກດິນແດນ** | |
| ຢຊ 1:12-15 | ຢຊ 13:1-21:45 |
| **ການຮັບໃຊ້ໂດຍການເຊື່ອຟັງພຣະບັນຍັດ** | |
| ຢຊ 1:16-18 | ຢຊ 22:1-24:33 |





# ພັນທະກິດຂອງ ໂຢຊວຍ

(ຢຊ 1:4-9)



# ສືບທອດພັນທະສັນຍາ

"ດັ່ງທີ່ເຮົາໄດ້ສັນຍາກັບໂມເຊແລ້ວວ່າ ເຮົາໄດ້ມອບດິນແດນທຸກບ່ອນທີ່ເຈົ້າຈະຢຽບ ໄປໃຫ້ເຈົ້າ ແລະປະຊາຊົນທັງໝົດຂອງເຮົາ" (ຢຊ 1:3)

ໃນພຣະທຳໂຢຊວຍ 1:3, ພຣະເຈົ້າຊົງກ່າວເຖິງເຫດການ ໃນແງ່ຄຳພະຍາກອນ. ພຣະອົງກ່າວເຖິງດິນແດນຄານາອານຄືກັບວ່າຊາວອິດສະຣາເອນໄດ້ເປັນເຈົ້າຂອງດິນແດນຕອນນັ້ນແລ້ວ. ນັ້ນໝາຍຄວາມວ່າ ພຣະເຈົ້າຊົງຮັບປະກັນເຖິງຄວາມສຳເລັດຂອງການພິຊິດດິນແດນແກ່ພວກເຂົາຢ່າງຄົບຖ້ວນ

ແລະ ພຣະອົງກໍ່ຊົງບອກພວກເຂົາເຖິງຂອບເຂດຂອງດິນແດນນັ້ນ (ຢຊ. 1:4): ລະຫວ່າງແມ່ນ້ຳຈໍແດນ(ຕາເວັນອອກ) ແລະ ທະເລເມດີແຕຣາເນ (ຕາເວັນຕົກ), ຈາກຖິ່ນແຫ້ງແລ້ງກັນດານ (ພາກໃຕ້) ຈົນເຖິງແມ່ນ້ຳເອີຟຣັດ (ທາງພາກເໜືອ).



ຈາກນັ້ນພຣະອົງຫັນໄປຫາໂຢຊວຍ ແລະ ຊົງສັ່ງວ່າໃຫ້ມີໃຈເດັດດ່ຽວແລະກ້າຫານ ພຣະອົງຈະບໍ່ປະຖິ້ມລາວ(Josh. 1:5-6).

ແຕ່ໄຊຊະນະບໍ່ໄດ້ຢູ່ທີ່ຄວາມພະຍາຍາມຂອງໂຢຊວຍພຽງຄົນດຽວ. ແຕ່ຢູ່ທີ່ການສັນຍາຂອງພຣະອົງ, ເຊັ່ນດຽວກັນກັບທີ່ພຣະອົງຊົງສັນຍາກັບພວກເຮົາວ່າ: "ເຮົາຢູ່ກັບເຈົ້າທັງຫລາຍທຸກໆວັນຈົນສິ້ນໂລກນີ້" (ຢຊ. 1:5; ມທ. 28:20).







# ຄວາມເຂັ້ມແຂງ ແລະ ຄວາມກ້າຫານ

"ຈົ່ງຈົດຈຳວ່າເຮົາໄດ້ສັ່ງເຈົ້າ ຈົ່ງມີໃຈເດັດດ່ຽວແລະກ້າຫານ ຢ່າຢ້ານຫລືທໍ້ຖອຍກຳລັງໃຈ ເພາະເຮົາຄືພຣະເຈົ້າຢາເວ ພຣະເຈົ້າຂອງເຈົ້າ ຢູ່ກັບເຈົ້າໃນທຸກໆບ່ອນທີ່ເຈົ້າໄປ (ຢຊ 1:9)



ໃນການທີ່ພຣະເຈົ້າຈະອວຍພອນໃຫ້ໂຢຊວຍມີກຳລັງຄວາມເຂັ້ມແຂງ (ຢຊ. 1:9), ພຣະອົງກໍ່ໄດ້ບອກລາວໃຫ້ເຊື່ອຟັງກົດບັນຍັດທຸກໆຂໍ້ກ່ອນ (ຢຊ. 1:7).

ນີ້ກໍ່ເປັນສິ່ງທີ່ເກີດຂຶ້ນໃນປະຈຸບັນເຊັ່ນກັນ. ພຣະເຈົ້າຊົງຂໍໃຫ້ພວກເຮົາພະຍາຍາມຮັກສາພຣະບັນຍັດຂອງພຣະອົງ.

ໃນສ່ວນຂອງພຣະອົງ, ພຣະອົງຊົງສັນຍາວ່າ "ຈະຊົງຢູ່ກັບພວກເຈົ້າໃນທຸກໆບ່ອນທີ່ເຈົ້າໄປ" (ຢຊ. 1:9), ຊ່ວຍພວກເຮົາໃນການເຮັດເສິກສົງຄາມທີ່ພວກເຮົາກຳລັງປະເຊີນຢູ່. ບໍ່ແມ່ນແຕ່ພຽງທາງຮ່າງກາຍ "ແຕ່ຕໍ່ກັບອຳນາດມືດຕ່າງໆ ບໍ່ວ່າຈະເປັນທູດຜີປີສາດວິນຍານຊົ່ວຂອງຊາຕານ," (ອຟຊ. 6:12). ເພື່ອການຕໍ່ສູ້ນີ້ ພຣະອົງຊົງໄດ້ຈັດຕຽມອາວຸດທີ່ຈຳເປັນໄວ້ໃຫ້ກັບພວກເຮົາ (ອຟຊ. 6:13-17).





ກະແຈສູ່ຄວາມສຳເລັດກໍ່ຄື ການໄວ້ວາງໃຈໃນພຣະເຈົ້າຢ່າງເຕັມທີ່ ແລະ ມີຄວາມສຳພັນກັບພຣະອົງໃນທຸກໆມື້ (ອຟຊ. 6:18).

# ຄວາມສຳເລັດຂອງພັນທະກິດ

"ຢ່າໃຫ້ໜັງສືນີ້ຫ່າງໄກຈາກປາກຂອງເຈົ້າ. ຈົ່ງພາວັນນາເອົາທຸກວັນທຸກຄືນ ແລະ ໃຫ້ແນ່ໃຈວ່າ ເຈົ້າເຊື່ອຟັງທຸກໆ ສິ່ງທີ່ໄດ້ມີຂຽນໄວ້ນັ້ນ. ແລ້ວເຈົ້າກໍຈະຈະເລີນຮຸ່ງເຮືອງ ແລະ ຈະປະສົບຄວາມສຳເລັດ (ຢຊ 1:8)



ຄວາມສຳເລັດຈາກມຸມມອງຂອງພຣະເຈົ້າ ແມ່ນແຕກຕ່າງຈາກຄວາມສຳເລັດຂອງມະນຸດ.

ຄວາມສຳເລັດທາງໂລກອັນບໍ່ແນ່ນອນທີ່ເກີດຂຶ້ນໃນໂລກນີ້, ແມ່ນເກີດຂຶ້ນຈາກການຝ່າຝືນກົດບັນຍັດຂອງພຣະເຈົ້າ ຄວາມສຳເລັດທີ່ແທ້ຈິງນິຣັນດອນ ແມ່ນການຮັກສາຊີວິດນິຣັນດອນ ແລະ ເຊື່ອຟັງສິ່ງທີ່ພຣະອົງບອກ (ຢຊ. 1:8).

ພວກເຮົາຈະປະສົບຜົນສຳເລັດໄດ້ ຖ້າວ່າປະຕິບັດຕາມຫລັກການດຳເນີນຊີວິດທີ່ມີບັນທຶກໄວ້ໃນພຣະຄຳພີ, ແລ້ວມັນເປັນການປະຕິບັດເພື່ອຄວາມລອດພົ້ນບໍ?

ບໍ່ແມ່ນເລີຍ. ຄວາມເຊື່ອ ແລະ ພຣະບັນຍັດບໍ່ໄດ້ຂັດແຍ້ງກັນ ແຕ່ເປັນສິ່ງທີ່ສະໜັບສະໜູນເຊິ່ງກັນແລະກັນ (ໂຣມ. 3:31). ເມື່ອພວກເຮົາເວົ້າເຖິງພຣະບັນຍັດ ແມ່ນສິ່ງທີ່ພວກເຮົາຄວນດຳເນີນຊີວິດໄປຕາມນັ້ນບໍ່ແມ່ນເພື່ອຄວາມລອດ ແຕ່ຄວາມສຳພັນລະຫວ່າງເຮົາກັບພຣະເຈົ້ານັ້ນສະແດງອອກໂດຍການເຊື່ອຟັງພຣະບັນຍັດຂອງພຣະອົງ.



"ຄຣິສຕຽນມີຜູ້ຊ່ວຍທີ່ເຂັ້ມແຂງຄືອົງພຣະຜູ້ເປັນເຈົ້າສະເໝີ. ບາງຄັ້ງພວກເຮົາອາດບໍ່ຮູ້ເຖິງຫົນທາງທີ່ພຣະອົງຈະຊ່ວຍພວກເຮົາ; ແຕ່ສິ່ງທີ່ພວກເຮົາຮູ້ກໍ່ຄື: ພຣະອົງຈະບໍ່ເຄີຍເຮັດໃຫ້ຜູ້ທີ່ໄວ້ວາງໃຈໃນພຣະອົງລົ້ມເຫລວ. ຖ້າວ່າພວກເຮົາລອງຄຳນຶງເຖິງເຫດການທີ່ພຣະເຈົ້າຊົງຊ່ວຍພວກເຮົາເພື່ອບໍ່ໃຫ້ແຜນການຂອງສັດຕູໄດ້ສຳເລັດແລ້ວ, ພວກເຮົາຈະຮູ້ ແລະ ຈະບໍ່ສະດຸດລົ້ມດ້ວຍການ ຈົ່ມວ່າ, ແຕ່ຄວາມເຊື່ອຂອງພວກເຮົາຍັງຄົງຕັ້ງໝັ້ນຢູ່ສະເໝີ ແລະ ບໍ່ມີການທົດລອງໃດໆທີ່ສາມາດລົ້ມພວກເຮົາໄດ້ ແລະ ພຣະອົງຈະຊົງເຮັດໃຫ້ສິ່ງທີ່ພຣະອົງປາຖະໜາໄດ້ເກີດຂຶ້ນຜ່ານຕົວຂອງພວກເຮົາ.

EGW (Prophets and Kings, p. 576)